ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ຫ້ອງການກະຊວງ

ເລກທີ 3555 /ຫກງ
ນະຄອນຫຼວງວຽງຈັນ, ວັນທີ 31 ທັນວາ 2018

# ໜັງສືເຊີນ

**ຮຽນ:** ບັນດາທ່ານ ຫົວໜ້າກົມ, ຜູ້ຊ່ວຍລັດຖະມົນຕີ, ຫົວໜ້າສະຖາບັນເສດຖະກິດ-ການເງິນ, ຫົວໜ້າສະຖາບັນພັດທະນາຂໍ້ມູນຂ່າວສານການເງິນ ແລະ ບັນດາທ່ານ ຜູ້ອໍານວຍການລັດວິສາຫະກິດ ອ້ອມຂ້າງກະຊວງການເງິນ.

**ເລື່ອງ:** ເຂົ້າຮ່ວມ ກອງປະຊຸມ ສະຫຼຸບວຽກງານແຜນການ-ການເງິນ ປະຈໍາປີ 2018 ແລະ ທິດທາງ ປະຈໍາປີ 2019.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງການເງິນ ສະບັບເລກທີ 2929/ກງ, ລົງວັນທີ 31 ສິງຫາ 2017;
- ອີງຕາມ ໜັງສືສະເໜີ ຂໍອະນຸມັດເປີດກອງປະຊຸມ ສະບັບເລກທີ 4238/ກງ, ລົງວັນທີ 31 ທັນວາ 2018;
- ອີງຕາມ ການຕົກລົງເຫັນດີເປັນເອກະພາບຈັດກອງປະຊຸມ ຮ່ວມກັນ ລະຫວ່າງ ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ຄັ້ງວັນທີ 26 ທັນວາ 2018.

ຫ້ອງການກະຊວງ ຂໍຖືເປັນກຽດຮຽນເຊີນມາຍັງທ່ານ ເພື່ອກະກຽມ ແລະ ເຂົ້າຮ່ວມກອງປະຊຸມດັ່ງກ່າວ, ຊຶ່ງຈະຈັດຂຶ້ນໃນລະຫວ່າງວັນທີ 07 ຫາ 08 ມັງກອນ 2019 ລະອຽດດັ່ງນີ້:

## 1. ວັນ, ເວລາ, ສະຖານທີ່ ແລະ ເນື້ອໃນກອງປະຊຸມ

### 1.1 ກອງປະຊຸມມື້ທີ 01

- **ວັນ, ເວລາ, ສະຖານທີ່**

ວັນທີ 07 ມັງກອນ 2019 ແມ່ນກອງປະຊຸມສະເພາະຂະແໜງການເງິນ ເພື່ອສະຫຼຸບການຈັດຕັ້ງປະຕິບັດວຽກງານການເງິນ ປະຈໍາປີ 2018 ແລະ ທິດທາງແຜນການ ປະຈໍາປີ 2019 ທີ່ຫໍປະຊຸມສູນການຄ້າລາວ-ໄອເຕັກ, ພາຍໃຕ້ການເປັນປະທານຂອງ ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ.

- **ເນື້ອໃນກອງປະຊຸມ**

1) ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈໍາປີ 2018, ພ້ອມທັງ ຄົ້ນຄວ້າປະກອບຄໍາເຫັນ, ຊອກຫາວິທີ, ມາດຕະການແກ້ໄຂບັນຫາ ແລະ ຂໍ້ຄົງຄ້າງຕ່າງໆຂອງວຽກງານການເງິນ ແນໃສ່ເຮັດໃຫ້ການເກັບລາຍຮັບເຂົ້າງົບປະມານແຫ່ງລັດ ປີ 2019 ກໍຄືປີຕໍ່ໆໄປ ບັນລຸຕາມແຜນການທີ່ໄດ້ວາງໄວ້;
2) ເຜີຍແຜ່ເຊື່ອມຊຶມ ບາງເນື້ອໃນຕົ້ນຕໍ ຂອງເອກະສານ ແລະ ນິຕິກໍາ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານການເງິນ;
3) ປະກອບຄໍາເຫັນໃສ່ ຮ່າງຄໍາແນະນໍາ ກ່ຽວກັບ ການສ້າງແຂວງໃຫ້ເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງໃຫ້ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານໃຫ້ເປັນຫົວໜ່ວຍພັດທະນາ ດ້ານການເງິນ ແລະ ຮ່າງຂໍ້ຕົກລົງວ່າດ້ວຍການເງິນບ້ານ.

### 1.2 ກອງປະຊຸມມື້ທີ 02

- **ວັນ, ເວລາ, ສະຖານທີ່**

ວັນທີ 08 ມັງກອນ 2018 ແມ່ນກອງປະຊຸມຮ່ວມກັນ ລະຫວ່າງ ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ເພື່ອສະຫຼຸບວຽກງານແຜນການ-ການເງິນ ປະຈໍາປີ 2018 ແລະ ທິດທາງ

ປະຈຳປີ 2019 ທີ່ຫໍປະຊຸມສູນການຄ້າລາວ-ໄອເຕັກ, ພາຍໃຕ້ການເປັນປະທານຂອງ ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ.

- **ເນື້ອໃນກອງປະຊຸມ**

1) ສະຫຼຸບ ແລະ ຕີລາຄາ ການຈັດຕັ້ງປະຕິບັດວຽກງານແຜນການ ແລະ ການເງິນ ປະຈຳປີ 2018 ກໍຄື ໃນໜຶ່ງປີທີ່ຜ່ານມາ, ພ້ອມທັງ ຕີລາຄາ ດ້ານດີ, ດ້ານອ່ອນຄົງຄ້າງ ແລະ ບົດຮຽນທີ່ສາມາດຖອດຖອນໄດ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນປີ 2019;
2) ແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ປະຈຳປີ 2019;
3) ເຜີຍແຜ່ເຊື່ອມຊຶມ ບາງເນື້ອໃນຕົ້ນຕໍເອກະສານ ແລະ ນິຕິກຳ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານແຜນການ ແລະ ການເງິນ;
4) ຮັບຟັງການໂອ້ລົມຂອງພະນະ ທ່ານ ທອງລຸນ ສີສຸລິດ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ.

**2. ເປົ້າໝາຍຜູ້ເຂົ້າຮ່ວມກອງປະຊຸມ**

1) ຫົວໜ້າ, ຮອງຫົວໜ້າຫ້ອງການກະຊວງ; ຫົວໜ້າກົມ, ຮອງຫົວໜ້າກົມ ແລະ ຫົວໜ້າ, ຮອງຫົວໜ້າສະຖາບັນ ອ້ອມຂ້າງກະຊວງ ເຂົ້າຮ່ວມໝົດທຸກທ່ານ, ຍົກເວັ້ນ ຜູ້ປະຈຳການ (01 ທ່ານ);
2) ຜູ້ອຳນວຍການ ຫຼື ຮອງຜູ້ອຳນວຍການ ບັນດາລັດວິສະຫາກິດ ເຂົ້າຮ່ວມ ພາກສ່ວນລະ 01 ທ່ານ;
3) ຫົວໜ້າພະແນກ, ຮອງຫົວໜ້າພະແນກ ອ້ອມຂ້າງຫ້ອງການກະຊວງ, ກົມ ແລະ ສະຖາບັນ ເຂົ້າຮ່ວມໝົດທຸກທ່ານ.

3. **ການນຸ່ງຖື:** ມື້ທີ 01 ແຕ່ງກາຍສຸພາບ; ສ່ວນມື້ທີ 02 ແຕ່ງກາຍຊຸດສາກົນ.

**4. ການເຂົ້າຮ່ວມກອງປະຊຸມ ແລະ ກະກຽມເອກະສານ**

ສະເໜີໃຫ້ແຕ່ລະພາກສ່ວນພິຈາລະນາ ເຂົ້າຮ່ວມກອງປະຊຸມທັງສອງມື້ (ມື້ທີ 01 ແລະ ມື້ທີ 02) ແລະ ກະກຽມເນື້ອໃນ ເພື່ອປະກອບຄຳເຫັນ ເປັນລາຍລັກອັກສອນ ແລະ ເຂົ້າຮ່ວມກອງປະຊຸມ (ລາຍລະອຽດ ໄດ້ຄັດຕິດວາລະກອງປະຊຸມ ມາພ້ອມນີ້).

**5. ຕິດຕໍ່ພົວພັນ ແລະ ປະສານງານ**

- ໂທ: 021 417 230, ໂທ/ ແຟັກ: 021 417 750, 412 409;
- ທ່ານ ນາງ ສອນວິພາດາ ເລືອງບຸນມີ ເບີໂທ: 020 5666 3363;
- ທ່ານ ນາງ ອາແລັນນາ ວົງລໍຄຳ ເບີໂທ: 020 7777 7330.

**ກະລຸນາແຈ້ງລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມ ກ່ອນວັນທີ 03 ມັງກອນ 2019.**

ດັ່ງນັ້ນ, ຈຶ່ງຮຽນເຊີນມາຍັງທ່ານ ເພື່ອກະກຽມ ແລະ ເຂົ້າຮ່ວມກອງປະຊຸມດ້ວຍ.

**ຫົວໜ້າຫ້ອງການກະຊວງ**

ສົມບູນ ອິນທະປັດຖາ